**ມິຊຊາອາທິດທີ 8 ການົດທຳມະດາ ປີ C**

**ວັນທີ 3 ມີນາ 2019**



**ພຣະວໍລະສານໂດຍນັກບຸນລູກາ 6, 39-45**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວຄວາມປຽບທຽບໃຫ້ພວກເຂົາຟັງອີກວ່າ: ຄົນຕາບອດຈະຈູງຄົນຕາບອດໄປໄດ້ບໍ? ທັງສອງຈະບໍ່ພາກັນຕົກຂຸມບໍ? ສິດບໍ່ລື່ນອາຈານ. ແຕ່ສິດທຸກຄົນທີ່ຮຽນສຳເລັດແລ້ວກໍຈະສະເໝີກັບອາຈານ.

ເຫດໃດເຈົ້າຈຶ່ງແນມເຫັນຂີ້ເຫຍື່ອຢູ່ໃນຕາອ້າຍນ້ອງເຈົ້າໄດ້? ສ່ວນທ່ອນໄມ້ທີ່ຢູ່ໃນຕາຂອງເຈົ້າເອງນັ້ນ ເຈົ້າແນມບໍ່ເຫັນ! ດັ່ງນີ້ເຈົ້າຈະເວົ້າກັບອ້າຍນ້ອງຂອງເຈົ້າໄດ້ຢ່າງໃດວ່າ: ອ້າຍເອີຍ! ປະໃຫ້ເຮົາເອົາຂີ້ເຫຍື່ອອອກຈາກຕາຂອງເຈົ້າແນ່ ແລ້ວເຈົ້າເອງບໍ່ເຫັນທ່ອນໄມ້ຢູ່ໃນຕາຂອງເຈົ້າຊໍ້າ. ຄົນໜ້າຊື່ໃຈຄົດເອີຍ! ໃຫ້ເອົາທ່ອນໄມ້ອອກຈາກຕາຂອງເຈົ້າເສຍກ່ອນ ແລ້ວຈຶ່ງຄ່ອຍເອົາຂີ້ເຫຍື່ອອອກຈາກຕາອ້າຍນ້ອງຂອງເຈົ້າ.

ຕົ້ນໄມ້ດີເກີດໝາກຂີ້ຮ້າຍບໍ່ໄດ້ ແລະກົກໄມ້ຂີ້ຮ້າຍເກີດໝາກດີກໍບໍ່ໄດ້ຄືກັນ. ເຮົາຮູ້ຈັກກົກໄມ້ແຕ່ລະກົກໄດ້ດ້ວຍເບິ່ງໝາກຂອງມັນ. ບໍ່ມີໃຜເກັບເອົາໝາກເດື່ອມາຈາກກົກໜາມ ຫລືເດັດເອົາພວງໝາກອະງຸ່ນມາຈາກກໍໜາມໄດ້. ຄົນຜູ້ດີກໍເອົາແຕ່ສິ່ງທີ່ດີມາຈາກຄັງອັນດີແຫ່ງດວງໃຈຂອງຕົນ. ສ່ວນຄົນຊົ່ວກໍເອົາແຕ່ແນວຊົ່ວມາຈາກຫົວໃຈຊົ່ວຂອງເຂົາ. ຍ້ອນວ່າປາກເຮົາມັກເວົ້າແຕ່ເລື່ອງທີ່ເຕັມລົ້ນຫົວໃຈອອກມາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 6, 39-45**

ວາຈາຂອງພຣະເຈົ້າໃນວັນນີ້ສືບຕໍ່ຈາກອາທິດທີ່ແລ້ວຊຶ່ງພຣະເຢຊູເຈົ້າສອນພວກເຮົາໃຫ້ມີໃຈເມດຕາກາລຸນາເໝືອນກັບພຣະບິດາເຈົ້າສະຫວັນຜູ້ມີພຣະໄທເມດຕາກາລຸນາ. ຄວາມເມດຕາກາລຸນານີ້ສະແດງອອກດ້ວຍຄວາມຮັກແລະການໃຫ້ອະໄພຢ່າງບໍ່ມີຂອບເຂດແລະບໍ່ມີເງື່ອນໄຂຕໍ່ທຸກຄົນ, ເປັນຕົ້ນຕໍ່ຜູ້ທີ່ເປັນສັດຕູກັບພວກເຮົາ.

ວັນນີ້ພຣະເຢຊູເຈົ້າສືບຕໍ່ໃຊ້ຄວາມປຽບທຽບກ່ຽວກັບ « ດວງຕາ » ແລະ « ຜົນລະປູກ » ເພື່ອສອນພວກເຮົາ. ແນ່ນອນຄົນຕາບອດບໍ່ສາມາດແນມເຫັນຄົນອື່ນແລະຍິ່ງໄປກວ່ານັ້ນເຂົາບໍ່ສາມາດຈະຊັກນຳຄົນອື່ນໄປໃນທາງທີ່ຖືກຕ້ອງໄດ້. ເຊັ່ນດຽວກັບຄົນທີ່ບໍ່ສາມາດແນມເຫັນຂີ້ເຫຍື່ອໃນຕາຂອງຕົນ. ທັງສອງກໍລະນີນີ້ລ້ວນແຕ່ຕ້ອງການອຸປະກອນຄວາມຊ່ວຍເຫລືອເພື່ອຈະໄດ້ເຫັນແຈ້ງສຳລັບຊ່ວຍເຫລືອຕົວເອງແລະຊ່ວຍເຫລືອຄົນອື່ນ. ແລະອຸປະກອນຄວາມຊ່ວຍເຫລືອນີ້ແມ່ນວາຈາຂອງພຣະເຈົ້ານັ້ນເອງ. ຜູ້ທີ່ນຳວາຈາຂອງພຣະເຈົ້າມາປະຕິບັດໃນຊີວິດບໍ່ພຽງແຕ່ເຂົາເອງຈະໄດ້ເຫັນແຈ້ງເຖິງຄວາມຂາດຕົກບົກຜ່ອງແລະຄວາມອອ່ນແອຂອງຕົນເພື່ອຈະໄດ້ດັດແປງແກ້ໄຂ ແຕ່ເຂົາຍັງສາມາດເປັນແສງສະວ່າງເພື່ອນຳພາຄົນອື່ນໃຫ້ກັບມາຫາເສັ້ນທາງອັນຊື່ກົງຂອງພຣະເຈົ້າໄດ້ອີກດ້ວຍ. ເພາະວາຈາຂອງພຣະເຈົ້າປຽບເໝືອນເມັດພືດທີ່ດີ ຖ້າຜູ້ໃດເປີດໃຈຮັບເອົາເມັດພືດນີ້ເຂົ້າໃນຊີວິດຂອງຕົນ ແນ່ນອນໝາກຜົນທີ່ໄດ້ຮັບຍ່ອມເປັນໝາກຜົນທີ່ດີ. ຍ້ອນກົກໄມ້ດີ ຍ່ອມໃຫ້ໝາກຜົນທີ່ດີ. ກົງກັນຂ້າມ, ຜູ້ທີ່ຟັງວາຈາຂອງພຣະເຈົ້າແລ້ວຫາກບໍ່ນຳມາປະຕິບັດໃນຊີວິດ ເຂົາປຽບເໝືອນຄົນທີ່ມີດວງຕາແຕ່ຂາດແສງສະວ່າງ. ບໍ່ພຽງແຕ່ເຂົາເອງຈະຕົກຂຸມແຕ່ເຂົາຍັງເປັນເຫດໃຫ້ຄົນອື່ນຕົກເຫວໄປນຳອີກດ້ວຍ. ເພາະເຂົາບໍ່ສາມາດແນມເຫັນຈຸດບົກຜ່ອງແລະສິ່ງບໍ່ດີຂອງຕົນເພື່ອກັບຈິດປ່ຽນໃຈ. ດັ່ງນັ້ນຊີວິດຂອງເຂົາຈຶ່ງປຽບເໝືອນກົກໄມ້ທີ່ບໍ່ດີແລະແນ່ນອນໝາກຜົນທີ່ໄດ້ຮັບກໍບໍ່ດີເຊັ່ນດຽວກັນ.

ພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າ, ຜູ້ມາຟັງວາຈາແລະຄຳເທດສອນຂອງພຣະອົງໃນແຕ່ລະທິດກໍເຊັ່ນດຽວກັນ. ພວກເຮົາໄດ້ໃຫ້ວາຈາອັນເປັນແສງສະວ່າງ, ເປັນຄວາມຈິງສ່ອງທາງໃຫ້ພວກເຮົາໃນຊີວິດຄອບຄົວ, ຊີວິດມອບຖະຫວາຍ, ຊີວິດຜູ້ເປັນລູກຂອງພຣະເຈົ້າບໍ? ພວກເຮົາໄດ້ພະຍາຍາມເຂົ້າໃຈແລະນຳເອົາຄຳສອນຂອງພຣະເຢຊູເຈົ້າມາດັດແປງແກ້ໄຂຊີວິດຂອງພວກເຮົາບໍ? ພວກເຮົາໄດ້ເປັນກິ່ງງ່າທີ່ຕິດສະໜິດກັບລຳຕົ້ນອັນແມ່ນພຣະເຢຊູກຣິສໂຕເຈົ້າບໍ? ຫລືພວກເຮົາເປັນຄົນທີ່ມີຕາແຕ່ແນມບໍ່ເຫັນ, ມີຫູແຕ່ບໍ່ໄດ້ຍິນ, ມີດວງໃຈແຕ່ເປັນດວງໃຈທີ່ແຂງກະດ້າງ? ແນ່ນອນພວກເຮົາແຕ່ລະຄົນຍ່ອມມີຄຳຕອບທີ່ເໝາະສົມສຳລັບຄຳຖາມເຫລົ່ານີ້. ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍເປີດດວງໃຈແລະສະຕິປັນຍາຂອງພວກເຮົາໃຫ້ເຂົ້າໃຈເຖິງຄຳສອນຂອງພຣະອົງ. ເພື່ອພວກເຮົາຈະໄດ້ນຳໄປປະຕິບັດໃນຊີວິດຂອງພວກເຮົາ, ໃນຄອບຄົວຂອງພວກເຮົາແລະໃນກຸ່ມວັດຂອງພວກເຮົາ. ເພື່ອພວກເຮົາແຕ່ລະຄົນຈະໄດ້ເປັນແສງສະວ່າງແລະເປັນແບບຢ່າງທີ່ດີເພື່ອນຳພາຄົນອື່ນໃຫ້ກັບມາຫາພຣະເຈົ້າ, ມາຫາເສັ້ນທາງອັນຊື່ກົງຂອງພຣະອົງ ອັນແມ່ນເສັ້ນທາງແຫ່ງບຸນມະຫາລາບນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ